Souphanouvong University Journal of Multidisciplinary Research and Development
2026, Vol. 12, 04F, 173-182 ISSN 2521-0563
https://doi.org/10.69692/SUJMRD1204F173

Personal Data Protection in the Hotel and Tourism Sector of Luang Prabang Province: Legal Gaps and Enforcement Limitations in the Digital Economy Era

Bird PHAIINTA[1]*, Nouphit LOUNBANDITH[2], Ansalee VORACHACK[3], Bounkhong CHANTHALANGMA[4], Soulisack CHANTHALUNGSY[5]
Department of Law, National Institute of Justice, Luang Prabang Branch, Ministry of Justice

***Correspondence:** Bird Phaiinta
Tel: +856 20 58 686 864;
Email: birdp269@gmail.com
[2] nlounbandit1980@gmail.com
(+856 20 22 402 249)
[3] ansaleevorachack@gmail.com
(+856 20 22 539 699)
[4] khong1986@gmail.com
(+856 20 55 377 925)
[5] soulisackcts@gmail.com
(+856 20 22 134 792)

Article Info:
Submitted: October 26, 2026
Revised: November 20, 2026
Accepted: November 24, 2026

Abstract

The growth of the digital economy in Luang Prabang's hospitality and tourism sector has increased the collection and processing of personal data from visitors and residents, yet the Lao PDR still has no comprehensive personal data protection law. Objective: This study analyze the legal framework on data protection, identified legal gaps and enforcement limitations in the hotel and tourism sector in Luang Prabang Province, and proposed recommendations for legislative development and enforcement mechanisms. Methods: A qualitative socio-legal design combined doctrinal analysis of six legal instruments with purposive-sample interviews of 16 participants (8 hotel operators, 5 tour companies, 3 provincial officials) conducted from January to March 2026, benchmarked against the GDPR and the ASEAN Framework on Personal Data Protection. Results: The analysis indicated that the relevant instruments are fragmented, and that the Law on Electronic Data Protection (No. 25/NA, 2017) applies only to electronic data, leaving paper-based records such as passport copies outside its direct scope. In practice, 11 out of 13 operators (84.6%) do not have a written privacy policy, and no provision requiring data breach notification was identified in the instruments reviewed. Provincial oversight is shared among several agencies without a lead agency, and is constrained by limited personnel and the absence of sector-specific guidance. Conclusions: Having national legislation does not necessarily mean effective local protection. The study contributes province-level empirical evidence that is scarce in the Lao PDR. The findings support a proportionate framework law, a provincial focal point, and practical guidance for small businesses, which could help strengthen visitor trust.

Keywords: Personal Data Protection; Hospitality and Tourism; Data Subject Rights; Digital Economy; Enforcement; ASEAN; Luang Prabang Province

1. ພາກສະເໜີ

ເສດຖະກິດດິຈິຕອນໃນພາກພື້ນອາຊຽນຂະຫຍາຍຕົວຢ່າງວ່ອງໄວ ໂດຍການຄ້າອອນລາຍ (E-commerce) ກວມເອົາສ່ວນແບ່ງໃຫຍ່ທີ່ສຸດປະມານ 60-70% ຂອງມູນຄ່າສິນຄ້າລວມ (Gross Merchandise Value - GMV). ຂະນະດຽວກັນ, ມູນຄ່າການທຳທຸລະກຳຊຳລະເງິນດິຈິຕອນ (Gross Transaction Value - GTV) ໃນອາຊຽນບັນລຸປະມານ 965 ພັນລ້ານໂດລາສະຫະລັດ ໃນປີ 2023 ແລະ ເຕີບໂຕທະລຸ 1 ພັນຕື້ໂດລາສະຫະລັດ (1 ພັນຕື້) ໃນປີ 2024 ຍ້ອນການຂະຫຍາຍຕົວຂອງກະເປົ໋າເງິນອີເລັກໂທຣນິກ (e-wallets), ການຊຳລະຜ່ານ QR Code ແລະ ການເຊື່ອມຕໍ່ລະບົບຊຳລະເງິນຂ້າມແດນ. ຄຽງຄູ່ກັນນັ້ນ, ຂະແໜງການທ່ອງທ່ຽວອອນລາຍມີອັດຕາການເຕີບໂຕຫຼາຍກວ່າ 18-20% ຕໍ່ປີ ແລະ ມີມູນຄ່າເກີນ 16-20 ພັນລ້ານ

*Copyright © 2026 by the Authors. Published by Souphanouvong University. This is an open access article under the CC BY-NC-ND license (*http://creativecommons.org/licenses/by-nc-nd/4.0/

ໂດລາສະຫະລັດ ໃນປີ 2024 ຈາກການຟື້ນຕົວຂອງການເດີນທາງ ແລະ ການຈອງທີ່ພັກ, ປີ້ຍົນ ລວມທັງກິດຈະກຳທ່ອງທ່ຽວຜ່ານແພັດຟອມ ແລະ ແອັບພລິເຄຊັນດິຈິຕອນ (Boston Consulting Group-BCG, 2023; Google et al., 2023, 2024).

ສຳລັບ ສປປ ລາວ, ລັດຖະບານໄດ້ວາງຍຸດທະສາດຍົກສ່ວນແບ່ງເສດຖະກິດດິຈິຕອນໃຫ້ກວມ 10% ຂອງ GDP ໃນປີ 2040 ແລະ ກຳນົດໃຫ້ ແຂວງຫຼວງພະບາງ ເປັນຕົວເມືອງເປົ້າໝາຍໃນການພັດທະນາໄປສູ່ ຕົວເມືອງອັດສະລິຍະ (Smart City) ຕາມໂຄງຮ່າງຂອງອາຊຽນ (ASEAN Secretariat, 2018; ກະຊວງເຕັກໂນໂລຊີ ແລະ ການສື່ສານ, 2021). ຫຼັງຈາກການເປີດໃຊ້ເສັ້ນທາງລົດໄຟລາວ-ຈີນ, ຈຳນວນນັກທ່ອງທ່ຽວທີ່ເຂົ້າມາແຂວງຫຼວງພະບາງເພີ່ມຂຶ້ນຈາກ 2,326,758 ເທື່ອຄົນ ໃນປີ 2024 ເປັນ 3,615,308 ເທື່ອຄົນ ໃນປີ 2025 (ພາຍໃນ 1,466,088 ແລະ ສາກົນ 2,149,220 ເທື່ອຄົນ), ພ້ອມທັງຈຳນວນໂຮງແຮມ/ເຮືອນພັກ ເພີ່ມຂຶ້ນຈາກ 570 ແຫ່ງ ເປັນ 648 ແຫ່ງ ແລະ ບໍລິສັດທ່ອງທ່ຽວເພີ່ມຂຶ້ນຈາກ 121 ເປັນ 139 ບໍລິສັດ (ພະແນກວັດທະນະທຳ ແລະ ທ່ອງທ່ຽວ ແຂວງຫຼວງພະບາງ, 2024, 2025).

ຂໍ້ມູນສ່ວນບຸກຄົນຂອງນັກທ່ອງທ່ຽວ (ເຊັ່ນ: ເລກໜັງສືຜ່ານແດນ, ບັດເຄຣດິດ, ຂໍ້ມູນສຸຂະພາບ) ຖືກເກັບກຳໂດຍວິສາຫະກິດຂະໜາດກາງ ແລະ ຂະໜາດນ້ອຍ (SMEs) ທີ່ມີຂໍ້ຈຳກັດດ້ານງົບປະມານ ແລະ ບຸກຄະລາກອນດ້ານຄວາມປອດໄພໄຊເບີ, ເຮັດໃຫ້ສ່ຽງຕໍ່ໄພຄຸກຄາມຕາມການແຈ້ງເຕືອນຂອງ LaoCERT ເຊັ່ ນ Phishing, Malware/ Ransomware ແລະ ການຮົ່ວໄຫຼຂອງຂໍ້ ມູ ນ (Data Breach). ໃນຊ່ວງປີ 2023-2025 ໄດ້ເກີດເຫດການຂໍ້ມູນໂຮງແຮມໃນອາຊຽນຮົ່ວໄຫຼຂາຍໃນ Dark Web (Tan & Chai, 2024), ເຊິ່ງທຸລະກິດ MSMEs ຫຼາຍກວ່າ 60% ທີ່ຖືກໂຈມຕີບໍ່ສາມາດຟື້ນໂຕໄດ້ ແລະ ຕ້ອງປິດກິດຈະການພາຍໃນ 6 ເດືອນ (Cybersecurity Ventures, 2023; Lim & Nor, 2023). ພ້ອມກັນນັ້ນ, ທຸລະກິດທ່ອງທ່ຽວທີ່ສະເໜີບໍລິການໃຫ້ແກ່ນັກທ່ອງທ່ຽວຈາກສະຫະພາບເອີຣົບ (EU) ຍັງຕ້ອງເຊື່ອມກັບຜືນບັງຄັບໃຊ້ນອກອານາເຂດຂອງ GDPR ມາດຕາ 3(2) ທີ່ກຳນົດມາດຕະຖານສູງດ້ານການຂໍຄວາມຍິນຍອມ ແລະ ສິດທິຂອງເຈົ້າຂອງຂໍ້ມູນ (European Parliament & Council of the European Union, 2016).

ໃນດ້ານນິຕິກຳ, ສປປ ລາວ ມີກົດໝາຍທີ່ກ່ຽວຂ້ອງຫຼາຍສະບັບ (ສະພາແຫ່ງຊາດ, 2015, 2017a, 2025) ແຕ່ຍັງຂາດກົດໝາຍແມ່ບົດຄຸ້ມຄອງຂໍ້ມູນສ່ວນບຸກຄົນແບບຄົບວົງຈອນ, ເຮັດໃຫ້ເກີດຊ່ອງຫວ່າງລະຫວ່າງ ກົດໝາຍໃນຕົວບົດ (Law in Books) ກັບ ກົດໝາຍໃນພາກປະຕິບັດ (Law in Action) ຢູ່ຂັ້ນທ້ອງຖິ່ນ. ການທົບທວນວັນນະກຳໃນໄລຍະ 5 ປີຫຼ້າສຸດ (2020-2025) ສັງເຄາະໄດ້ເປັນ 3 ປະເດັນຫຼັກ ຄື: (1) ພາລະຕົ້ນທຶນການປະຕິບັດຕາມກົດໝາຍຂອງ SMEs: ໃນໄທ (PDPA, 2019), ອິນໂດເນເຊຍ (UU PDP, 2022) ແລະ ຫວຽດນາມ (Law No. 91/2025/QH15), ໂຮງ ແຮມຂະໜາດນ້ອຍປະເຊີນກັບຕົ້ນທຶນສູງ, ຂາດເຈົ້າໜ້າທີ່ DPO, ຂາດຄູ່ມືທີ່ເຂົ້າໃຈງ່າຍ ແລະ ເກີດຄວາມສັບສົນໃນການຂໍຄວາມຍິນຍອມ (Tang & Chen, 2023); (2) ຈຸດອ່ອນດ້ານຄວາມເປັນສ່ວນຕົວໃນທຸລະກິດໂຮງແຮມ: ການປ່ຽນພະນັກງານຕ້ອນຮັບເລື້ອຍໆ, ການຂາດການຝຶກອົບຮົມ ແລະ ການນຳໃຊ້ອຸປະກອນສ່ວນຕົວ (BYOD) ເພີ່ມຄວາມສ່ຽງຕໍ່ການຮົ່ວໄຫຼຂອງຂໍ້ມູນ; ແລະ (3) ຄວາມແຕກຕ່າງດ້ານກົດໝາຍໃນອາຊຽນ (Regulatory Heterogeneity): ປະເທດໄທ, ອິນໂດເນເຊຍ, ສິງກະໂປ, ມາເລເຊຍ ແລະ ຟີລິບປິນ ມີກົດໝາຍແມ່ບົດ ແລະ ອົງການກຳກັບດູແລ (DPA) ເອກະ ລາດ, ໃນຂະນະທີ່ ສປປ ລາວ ຍັງ ນຳໃຊ້ກົດໝາຍແບບກະແຈກກະຈາຍທີ່ເນັ້ນຄວາມໝັ້ນຄົງຂອງລັດ ຫຼາຍກວ່າການຄຸ້ມຄອງສິດຄວາມເປັນສ່ວນຕົວ (Greenleaf, 2021; Svantesson, 2020).

ສຳລັບນິຍາມຫຼັກທີ່ໃຊ້ໃນການວິໄຈ ອີງໃສ່ມາດຕາ 3 ຂອງກົດໝາຍວ່າດ້ວຍການປົກປ້ອງຂໍ້ມູນເອເລັກໂຕຣນິກ ສະ ບັບເລກທີ 25/ ສພຊ (ສະພາແຫ່ງຊາດ, 2017a) ດັ່ງນີ້: ຂໍ້ມູນສ່ວນບຸກຄົນ ໝາຍເຖິງ ຂໍ້ມູນເອເລັກໂຕຣນິກຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ; ເຈົ້າ ຂອງຂໍ້ມູນ ໝາຍເຖິງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເປັນເຈົ້າ ຂອງຂໍ້ ມູນເອເລັກໂຕຣນິກ; ຜູ້ຄວບຄຸມຂໍ້ ມູນ ໝາຍເຖິງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີໜ້າທີ່ຄຸ້ມຄອງຂໍ້ ມູນເອເລັກໂຕຣນິກ (ເຊັ່ນ ກະ ຊວງ, ສູນຂໍ້ ມູນ, ຜູ້ໃຫ້ບໍລິການອິນເຕີເນັດ, ທະນາຄານ); ແລະ ການຄຸ້ມຄອງຂໍ້ ມູນເອເລັກໂຕຣນິກ ໝາຍເຖິງການບໍລິ ຫານ ແລະ ຈັດການຂໍ້ ມູນ (ເກັບ, ສຳເນົາ, ສົ່ງ, ຮັບ, ຮັກສາ ແລະ ທຳລາຍ). ຂໍ້ ສັງເກດຄື ຕົວບົດກົດໝາຍ (ສະພາແຫ່ງຊາດ, 2017a) ຂອງ ສປປ ລາວ ຜູກພັນສະເພາະກັບຂໍ້ ມູນເອເລັກໂຕຣນິກເທົ່ານັ້ນ ແຕກຕ່າງຈາກ ກົດໝາຍສາກົນທີ່ກວມລວມເອກະສານເຈ້ຍ ແລະ ບໍ່ໄດ້ແຍກຜູ້ຄວບ ຄຸມຂໍ້ ມູນ ອອກຈາກຜູ້ປະມວນຜົນຂໍ້ ມູນ.

ການສຶກສານີ້ສ້າງກອບແນວຄິດແບບ socio-legal ໂດຍ ປະສານສອງແກນຫຼັກ. ແກນທຳອິດແມ່ນທິດສະດີ Law in Books vs. Law in Action ເຊິ່ງວິເຄາະປຽບທຽບລະຫວ່າງຕົວບົດກົດໝາຍ ລະດັບຊາດ ກັບພາກປະຕິບັດຕົວຈິງຢູ່ຂັ້ນທ້ອງຖິ່ນ. ແກນທີສອງແມ່ນ ຫຼັກການປົກປ້ອງຂໍ້ ມູນສາກົນ 6 ປະການ ຕາມ GDPR (European Parliament & Council of the European Union, 2016) ແລະ ກອບອາຊຽນ (ASEAN Secretariat, 2016) ຄື: ຄວາມຖືກຕ້ອງ ຕາມກົດໝາຍ, ຄວາມເປັນທຳ ແລະ ຄວາມໂປ່ງໃສ; ການຈຳກັດ ຈຸດປະສົງ; ການຫຼຸດຜ່ອນຂໍ້ ມູນ; ຄວາມຖືກຕ້ອງ; ການຈຳ ກັດໄລຍະ ເວລາເກັບຮັກສາ; ແລະ ຄວາມໝັ້ນຄົງປອດໄພ, ການຮັກສາຄວາມລັບ ແລະ ຄວາມຮັບຜິດຊອບ. ກອບແນວຄິດດັ່ງກ່າວຖືກແປງເປັນ 5 ມິຕິ ການວິເຄາະ ຄື ມິຕິ 1 (ຂອບເຂດ ແລະ ນິຍາມ), ມິຕິ 2 (ຄວາມໂປ່ງ ໃສ ແລະ ຄວາມຍິນຍອມ), ມິຕິ 3 (ສິດຂອງເຈົ້າຂອງຂໍ້ ມູນ), ມິຕິ 4 (ມາດຕະການຄວາມປອດໄພ ແລະ ການແຈ້ງເຫດຮົ່ວໄຫຼ) ແລະ ມິຕິ 5 (ໂຄງສ້າງການກຳກັບ ແລະ ບັງຄັບໃຊ້).

ດັ່ງນັ້ນ ການຄົ້ນຄວ້ານີ້ຈຶ່ງມີຈຸດປະສົງເພື່ອວິເຄາະກອບນິຕິກຳ ວ່າດ້ວຍການປົກປ້ອງຂໍ້ ມູນ, ລະບຸຊ່ອງຫວ່າງທາງກົດໝາຍ ແລະ ຂໍ້ ຈຳກັດໃນການບັງຄັບໃຊ້ໃນຂະແໜງໂຮງແຮມ ແລະ ທ່ອງທ່ຽວ ແຂວງ ຫຼວງພະບາງ ແລະ ສະເໜີແນວທາງພັດທະນານິຕິກຳ ແລະ ກົນໄກ ບັງຄັບໃຊ້.

ຂອບເຂດຂອງການສຶກສາແມ່ນຂະແໜງໂຮງແຮມ ແລະ ທ່ອງ ທ່ຽວ ແຂວງຫຼວງພະບາງ ແລະ ນິຕິກຳລະດັບຊາດທີ່ມີຜົນໃຊ້ໃນໄລຍະ

ເກັບຂໍ້ມູນ. ການສຶກສານີ້ປະກອບສ່ວນໃນ 3 ດ້ານ ຄື (1) ໃຫ້ຫຼັກຖານພາກສະໜາມລະດັບແຂວງ ເຊິ່ງຍັງຫາຍາກໃນ ສປປ ລາວ, (2) ຊີ້ໃຫ້ເຫັນບັນຫາຂອບເຂດຂອງກົດໝາຍຕໍ່ຂໍ້ມູນໃນເອກະສານເຈ້ຍ ແລະ (3) ເຊື່ອມຊ່ອງຫວ່າງທາງກົດໝາຍເຂົ້າກັບຄວາມສາມາດໃນການປະຕິບັດຂອງທ້ອງຖິ່ນ.

2. ວິທີການຄົ້ນຄວ້າ

2.1 ປະຊາກອນ ແລະ ກຸ່ມຕົວຢ່າງ

ການສຶກສານີ້ເປັນການຄົ້ນຄວ້າແບບຄຸນນະພາບ ທີ່ລວມການວິເຄາະຕົວບົດກົດໝາຍແບບ doctrinal (ນິຕິກຳ 6 ສະບັບ: ສະພາແຫ່ງຊາດ. (2015); ສະພາແຫ່ງຊາດ. (2016); ສະພາແຫ່ງຊາດ. (2017a); ສະພາແຫ່ງຊາດ. (2017b); ສະພາແຫ່ງຊາດ. (2022); ແລະ ສະພາແຫ່ງຊາດ. (2025) ກັບການສຳພາດເຈາະຈົງ. ກອບການເລືອກຕົວຢ່າງອ້າງອີງຈາກຖານຂໍ້ມູນຂອງພະແນກວັດທະນະທຳ ແລະ ທ່ອງທ່ຽວ ແຂວງຫຼວງພະບາງ (ພະແນກວັດທະນະທຳ ແລະ ທ່ອງທ່ຽວ ແຂວງຫຼວງພະບາງ, 2024, 2025) ເຊິ່ງມີໂຮງແຮມ/ເຮືອນພັກ 648 ແຫ່ງ ແລະ ບໍລິສັດທ່ອງທ່ຽວ 139 ບໍລິສັດ.

ການຄັດເລືອກໃຊ້ວິທີເລືອກແບບເຈາະຈົງ ຄືເລືອກຜູ້ໃຫ້ຂໍ້ມູນຕາມເກນທີ່ກຳນົດໄວ້ລ່ວງໜ້າ ແລະ ບໍ່ໄດ້ໃຊ້ສູດຄຳນວນທາງສະຖິຕິ ເນື່ອງຈາກການຄົ້ນຄວ້າແບບຄຸນນະພາບບໍ່ມີຈຸດປະສົງເພື່ອຄາດຄະເນຄ່າຂອງປະຊາກອນ ແຕ່ເພື່ອເຂົ້າ ໃຈພາກປະຕິບັດຢ່າງເລິກເຊິ່ງ. ຂະໜາດກຸ່ມຕົວຢ່າງ 16 ທ່ານ/ຫົວໜ່ວຍ ກຳນົດຕາມຫຼັກການຄວາມພຽງພໍຂອງຂໍ້ມູນ (information power) ເຊິ່ງຂຶ້ນກັບຈຸດປະສົງການສຶກສາ ທີ່ແຄບ, ຄວາມກ່ຽວຂ້ອງຂອງຜູ້ໃຫ້ຂໍ້ມູນກັບປະເດັນ ແລະ ຄຸນນະພາບຂອງການສຳພາດ (Malterud et al., 2016). ນອກຈາກນີ້ ໃນການສຶກສາຄຸນນະພາບທີ່ຜູ້ໃຫ້ຂໍ້ມູນມີລັກສະນະຄ້າຍຄືກັນ ຫົວຂໍ້ຫຼັກມັກປາກົດຊັດເຈນພາຍໃນການສຳພາດປະມານ 12 ຄັ້ງ (Guest et al., 2006). ເພື່ອໃຫ້ຂໍ້ມູນມີຄວາມສົມດຸນ ແລະ ສະທ້ອນສະພາບຕົວຈິງຂອງທຸລະກິດແຕ່ລະລະດັບ, ກຸ່ມໂຮງແຮມຈຶ່ງຖືກແບ່ງຕາມຂະໜາດອອກເປັນໂຮງແຮມຂະໜາດໃຫຍ່ 2 ແຫ່ງ (H01-H02), ຂະໜາດກາງ 3 ແຫ່ງ (H03-H05) ແລະ ຂະໜາດນ້ອຍ 3 ແຫ່ງ (H06-H08); ສ່ວນກຸ່ມເຈົ້າໜ້າທີ່ພາກລັດຖືກເລືອກຈາກ 3 ຫົວໜ່ວຍທີ່ກ່ຽວຂ້ອງໂດຍກົງກັບການກຳກັບດູແລ. ຜົນທີ່ໄດ້ແມ່ນກຸ່ມຕົວຢ່າງ 16 ທ່ານ/ຫົວໜ່ວຍ (ເດືອນມັງກອນ-ມີນາ 2026) ດັ່ງນີ້:

- **ກຸ່ມໂຮງແຮມ/ເຮືອນພັກ (H01-H08, n=8):** ປະກອບດ້ວຍໂຮງແຮມຂະໜາດໃຫຍ່ ລະດັບ 4-5 ດາວ ຈຳນວນ 2 ແຫ່ງ (H01-H02), ຂະໜາດກາງ ລະດັບ 3 ດາວ ຈຳນວນ 3 ແຫ່ງ (H03-H05) ແລະ ຂະໜາດນ້ອຍ/ບູຕິກ ຈຳນວນ 3 ແຫ່ງ (H06-H08) ທີ່ເປີດດຳເນີນງານ 3 ປີຂຶ້ນໄປ ແລະ ນຳໃຊ້ລະບົບການຈອງອອນລາຍ ຫຼື ລະບົບບໍລິຫານຈັດການໂຮງ ແຮມ (OTA/PMS).
- **ກຸ່ມບໍລິສັດທ່ອງທ່ຽວ (T01-T05, n=5):** ບໍລິສັດຮັບ-ສົ່ງ, ຈັດທົວ ຫຼື ເຊົ່າພາຫະນະ ທີ່ເປີດດຳເນີນງານ 3 ປີຂຶ້ນໄປ ແລະ ເກັບກຳຂໍ້ມູນໜັງສືຜ່ານແດນ (Passport) ຜ່ານຊ່ອງທາງດິຈິຕອນ (WhatsApp, Email).
- **ກຸ່ມເຈົ້າໜ້າທີ່ພາກລັດ (G01-G03, n=3):** ຜູ້ຕາງໜ້າຈາກພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ (G01), ພະແນກວັດທະນະທຳ ແລະ ທ່ອງທ່ຽວແຂວງ (G02) ແລະ ເຈົ້າໜ້າທີ່ກວດຄົນເຂົ້າເມືອງ/ຕຳຫຼວດ (G03).

2.2 ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ

ປະກອບມີ ແບບສຳພາດເຄິ່ງໂຄງສ້າງ (Semi-structured Interview Protocols) ແບ່ງເປັນ:

- ແບບສຳພາດຜູ້ປະກອບການ 5 ຫົວຂໍ້ (ຂໍ້ມູນພື້ນຖານ, ການເກັບກຳ, ການເກັບຮັກສາ/ຄວາມປອດໄພ, ການແບ່ງປັນ, ຄວາມຮູ້/ອຸປະສັກ).
- ແບບສຳພາດເຈົ້າໜ້າທີ່ 4 ຫົວຂໍ້ (ບົດບາດ/ໜ້າທີ່, ການຕິດຕາມ/ກວດກາ, ກອບກົດໝາຍ/ຂໍ້ຈຳກັດ, ທິດທາງສະໜັບສະໜຸນ).

ເຄື່ອງມືໄດ້ຜ່ານການກວດສອບຄວາມທ່ຽງຕົງດ້ານເນື້ອໃນ (Content Validity) ໂດຍຜູ້ຊ່ຽວຊານ 3 ທ່ານ (ດ້ານກົດໝາຍ, ຄວາມປອດໄພໄຊເບີ ແລະ ການທ່ອງທ່ຽວ/ວິໄຈ) ຜ່ານການປະເມີນຄຸນນະພາບແບບມີໂຄງສ້າງ (Structured Qualitative Expert Review) ອີງຕາມ 5 ມິຕິການວິເຄາະຂອງການສຶກສາ ແທນການຄິດໄລ່ຄະແນນດັດຊະນີ IOC ເນື່ອງຈາກເປັນຄຳຖາມສຳພາດເຄິ່ງໂຄງສ້າງ ທີ່ຕ້ອງການຄວາມຍືດຍຸ່ນໃນການຊັກຖາມເຈາะເລິກ. ຜູ້ຊ່ຽວຊານໄດ້ປະເມີນຄວາມສອດຄ່ອງຂອງຄຳຖາມກັບຈຸດປະສົງການວິໄຈ, ຄວາມຊັດເຈນ ແລະ ຄວາມເໝາะສົມກັບບໍລິບົດທ້ອງຖິ່ນ ພ້ອມໃຫ້ຂໍ້ສະເໜີແນะໃນການປັບປຸງຖ້ອຍຄຳ ຈາກນັ້ນຈຶ່ງນຳມາທົດລອງສຳພາດ ກັບ 2 ຫົວໜ່ວຍ ເພື່ອປັບຄຳສັບເຕັກນິກໃຫ້ເປັນພາສາເວົ້າທີ່ເຂົ້າໃຈງ່າຍ.

2.3 ວິທີການເກັບກຳຂໍ້ມູນ

ຂໍ້ມູນເກັບຈາກສອງແຫຼ່ງ. ແຫຼ່ງທຸຕິຍະພຸມປະກອບດ້ວຍນິຕິກຳ 6 ສະບັບ, ບົດລາຍງານສະຖິຕິຂອງພະແນກວັດ ທະນະທຳ ແລະ ທ່ອງທ່ຽວແຂວງ ປີ 2024-2025, ເກັບກຳຂໍ້ມູນພາກສະໜາມໃນເດືອນມັງກອນ-ມີນາ 2026 ຢູ່ແຂວງຫຼວງພະບາງ. ການສຳພາດດຳເນີນຜ່ານການ ຂໍຄວາມຍິນຍອມດ້ວຍວາจา ທີ່ບັນທຶກສຽງໄວ້, ໃຊ້ເວລາສະເລ່ຍ 40-60 ນາທີ ຕໍ່ທ່ານ. ຂໍ້ມູນທັງໝົດຖືກປ່ຽນເປັນລະຫັດ ເຊັ່ນ H01-H08, T01-T05, G01-G03.

2.4 ການວິເຄາะຂໍ້ມູນ

ການວິເຄາะຂໍ້ມູນແບ່ງເປັນ 2 ວິທີ:

1. Deductive Content Analysis: ວິເຄາะເນື້ອໃນແບບອະນຸມານ 5 ຂັ້ນຕອນ (ຖອດເທັບ, ສ້າງ Codebook ຕາມ 5 ມິຕິ, ໃສ່ລະຫັດດ້ວຍ NVivo/Microsoft Excel, ຈັດໝວດໝູ່, ຕີຄວາມໝາຍ). ຄວາມໜ້າເຊື່ອຖື ຮັບປะกันด้วย Data Triangulation ระหว่าง 3 กุ่มผู้ให้สำพาด และ ตือบิดกิดหมาย.

2. ການປຽບທຽບ ແລະ ຈັດລะดับ: ใช้ GDPR และ ขอบอาซูน (2016) เป็นเกนปรุบทรุบ. การจัดละดับพาปะติบัด ใช้ 5 เงื่อนไข (เอกะสานขั้นตอน, แจ้งจุดประสิง, ขอความ ยินยอม, จำกัดสิดเข้าเถิง, ไลยะเอลาเกับ/ลืบ) แบ่งเป็น 3 ละดับ: สูง (4-5 เงื่อนไข), กาง (2-3 เงื่อน ไข), ต่ำ (0-1 เงื่อนไข).

2.5 ຈັນຍາບັນການຄົ້ນຄວ້າ

ການສຶກສານີ້ດຳເນີນຕາມມາດຕະຖານຈັນຍາບັນວິຊາການ: ຂໍ Informed Consent ຈາກຜູ້ໃຫ້ສຳພາດ, ຮັກສາ Anonymity & Confidentiality ໂດຍປິດບັງຊື່ ແລະ ອົງກອນ, ຟາຍສຽງ ແລະ ບົດຖອດເທັບຖືກເກັບໃນ cloud ແລະ ຈະຖືກລຶບທຳລາຍຖາວອນພາຍໃນ 12 ເດືອນ ຫຼັງເຜີຍແຜ່.

3. ຜົນໄດ້ຮັບ

3.1 ການວິເຄາະກອບນິຕິກຳວ່າດ້ວຍການປົກປ້ອງຂໍ້ມູນ ແລະ ຊ່ອງຫວ່າງທາງກົດໝາຍ ໂດຍປຽບທຽບກັບ GDPR, ກອບອາຊຽນ, ໄທ ແລະ ອິນໂດເນເຊຍ

ຈາກການວິເຄາະຕົວບົດກົດໝາຍ (Doctrinal Analysis) ຂອງ ສປປ ລາວ ຈຳນວນ 6 ສະບັບ ພົບວ່າ ປັດຈຸບັນ ສປປ ລາວ ຍັງບໍ່ທັນມີກົດໝາຍແມ່ບົດ ວ່າດ້ວຍການປົກປ້ອງຂໍ້ມູນສ່ວນບຸກຄົນສະເພາະ, ເຮັດໃຫ້ບົດບັນຍັດດ້ານການຄຸ້ມຄອງຂໍ້ມູນມີລັກສະນະກະແຈກກະຈາຍ (Fragmented) ຢູ່ໃນຫຼາຍນິຕິກຳທີ່ເນັ້ນໃສ່ຄວາມໝັ້ນຄົງທາງໄຊເບີ ແລະ ການຄຸ້ມຄອງທຸລະກຳອອນລາຍຫຼາຍກວ່າການຄຸ້ມຄອງສິດຄວາມເປັນສ່ວນຕົວຂອງບຸກຄົນ (ຕາຕະລາງທີ 1).

ຕາຕະລາງທີ 1: ສັງເຄາະກອບນິຕິກຳທີ່ກ່ຽວຂ້ອງກັບການປົກປ້ອງຂໍ້ມູນຂອງ ສປປ ລາວ

ນິຕິກຳ (ເລກທີ/ປີ)	ບົດບາດທີ່ກ່ຽວຂ້ອງ	ຂອບເຂດ	ແລະ ຊ່ອງຫວ່າງທາງກົດໝາຍ
ກົດໝາຍວ່າດ້ວຍການປົກປ້ອງຂໍ້ມູນເອເລັກໂຕຣນິກ (25/ສພຊ, 2017)	ກຳນົດຫຼັກການເກັບ-ນຳໃຊ້-ເປີດເຜີຍ, ການຍິນຍອມ ແລະ ການສົ່ງຂໍ້ມູນອອກນອກປະເທດ	ເອເລັກໂຕຣນິກ	ບໍ່ກວມລວມຂໍ້ມູນເຈ້ຍ; ບໍ່ແຍກ Controller/Processor; ບໍ່ມີພັນທະແຈ້ງເຫດຮົ່ວໄຫຼ ແລະ ຂາດອົງການ DPA ເອກະລາດ
ກົດໝາຍວ່າດ້ວຍຄວາມປອດໄພໄຊເບີ (87/ສພຊ, 2025)	ກົດໝາຍວ່າດ້ວຍຄວາມປອດໄພໄຊເບີ (87/ສພຊ, 2025)	ກົດໝາຍວ່າດ້ວຍຄວາມປອດໄພໄຊເບີ (87/ສພຊ, 2025)	ກົດໝາຍວ່າດ້ວຍຄວາມປອດໄພໄຊເບີ (87/ສພຊ, 2025)
ກົດໝາຍວ່າດ້ວຍທຸລະກຳທາງເອເລັກໂຕຣນິກ (31/ສພຊ, 2022)	ກົດໝາຍວ່າດ້ວຍທຸລະກຳທາງເອເລັກໂຕຣນິກ (31/ສພຊ, 2022)	ກົດໝາຍວ່າດ້ວຍທຸລະກຳທາງເອເລັກໂຕຣນິກ (31/ສພຊ, 2022)	ກົດໝາຍວ່າດ້ວຍທຸລະກຳທາງເອເລັກໂຕຣນິກ (31/ສພຊ, 2022)
ກົດໝາຍວ່າດ້ວຍເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ (02/ສພຊ, 2016)	ກົດໝາຍວ່າດ້ວຍເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ (02/ສພຊ, 2016)	ກົດໝາຍວ່າດ້ວຍເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ (02/ສພຊ, 2016)	ກົດໝາຍວ່າດ້ວຍເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ (02/ສພຊ, 2016)
ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ (61/ສພຊ, 2015)	ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ (61/ສພຊ, 2015)	ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ (61/ສພຊ, 2015)	ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ (61/ສພຊ, 2015)
ປະມວນກົດໝາຍອາຍາ (26/ສພຊ, 2017)	ລົງໂທດການເປີດເຜີຍຂໍ້ມູນ/ຄວາມລັບໂດຍບໍ່ໄດ້ຮັບອະນຸຍາດ	ເອເລັກໂຕຣນິກ ແລະ ເຈ້ຍ	ຕ້ອງພິສູດຄວາມເສຍຫາຍທາງອາຍາ; ບໍ່ມີກົນໄກປັບໃໝທາງປົກຄອງທີ່ວ່ອງໄວ

ໝາຍເຫດ: DPA = Data Protection Authority (ອົງການກຳກັບດູແລການປົກປ້ອງຂໍ້ມູນສ່ວນບຸກຄົນ); ສພຊ = ສະພາແຫ່ງຊາດ.

ເມື່ອນຳກອບນິຕິກຳຂອງ ສປປ ລາວ (ໂດຍສະເພາະ ສະພາແຫ່ງຊາດ. (2017a) ແລະ ສະພາແຫ່ງຊາດ. (2025) ມາວິເຄາະປຽບທຽບກັບ GDPR (EU 2016/679), ກອບອາຊຽນ (ASEAN Framework on PDP, 2016), ພ.ຣ.ບ. ຄຸ້ມຄອງຂໍ້ມູນສ່ວນບຸກຄົນຂອງໄທ (PDPA, 2019) ແລະ ກົດໝາຍປົກປ້ອງຂໍ້ມູນສ່ວນບຸກຄົນຂອງອິນໂດເນເຊຍ (UU PDP No. 27/2022) ຕາມ 5 ມິຕິການວິເຄາະ ສາມາດລະບຸ ຊ່ອງຫວ່າງທາງກົດໝາຍ (Legal Gaps) ທີ່ສຳຄັນ 5 ປະການ ດັ່ງນີ້ (ຕາຕະລາງທີ 2):

1. **ຊ່ອງຫວ່າງດ້ານຂອບເຂດຂໍ້ມູນເຈ້ຍ ແລະ ການຈຳແນກປະເພດ (ມິຕິ 1):** ສະພາແຫ່ງຊາດ. (2017a). ມາດຕາ 2 ແລະ 3 ຜູກພັນສະເພາະ *"ຂໍ້ມູນເອເລັກໂຕຣນິກ"* ເທົ່ານັ້ນ, ເຮັດໃຫ້ຂໍ້ມູນສ່ວນບຸກຄົນໃນຮູບແບບເອກະສານເຈ້ຍ (ເຊັ່ນ ສຳເນົາໜັງສືຜ່ານແດນ, ໃບລົງທະບຽນແຂກ) ຕົກຢູ່ນອກຂອບເຂດການຄຸ້ມຄອງໂດຍກົງ, ແຕກຕ່າງຈາກ GDPR, ໄທ (PDPA) ແລະ ອິນໂດເນເຊຍ (UU PDP) ທີ່ຄຸ້ມຄອງຂໍ້ມູນສ່ວນບຸກຄົນທຸກຮູບແບບ. ນອກຈາກນີ້ ຍັງບໍ່ໄດ້ແຍກຄວາມຮັບຜິດຊອບລະຫວ່າງ ຜູ້ຄວບຄຸມຂໍ້ມູນ (Data Controller) ກັບ ຜູ້ປະມວນຜົນຂໍ້ມູນ (Data Processor) (ເຊັ່ນ ລະບົບ OTA ຫຼື ບໍລິສັດບັນຊີພາຍນອກ) ແລະ ບໍ່ໄດ້ກຳນົດມາດຕະການຄຸ້ມຄອງພິ ເສດສຳລັບ ຂໍ້ມູນອ່ອນໄຫວ (Sensitive Data) ເຊັ່ນ ຂໍ້ມູນສຸຂະພາບ, ຊີວະມິຕິ (Biometrics) ຫຼື ສາສະໜາ.
2. **ຊ່ອງຫວ່າງດ້ານຖານກົດໝາຍ ແລະ ມາດຕະຖານຄວາມຍິນຍອມ (ມິຕິ 2):** ເຖິງແມ່ນມາດຕາ 12 ແລະ 16 ຂອງສະພາແຫ່ງຊາດ 2017a. ຈະກຳນົດໃຫ້ຂໍອະນຸຍາດກ່ອນເກັບກຳຂໍ້ມູນ, ແຕ່ຍັງຂາດຖານກົດໝາຍທາງເລືອກອື່ນໆ ທີ່ຈຳເປັນຕໍ່ທຸລະກິດທ່ອງທ່ຽວ (ເຊັ່ນ ຖານສັນຍາ ຫຼື ຖານຜົນປະໂຫຍດອັນຊອບທຳ ຄືໃນ GDPR Art.

6 ແລະ PDPA ຂອງໄທ ມາດຕາ 24) ແລະ ຍັງບໍ່ມີຂໍ້ກຳນົດເລື່ອງ Unbundled Consent (ການແຍກຂໍຄວາມຍິນຍອມອອກຈາກເງື່ອນໄຂການໃຫ້ບໍລິການທົ່ວໄປ).

3. **ຊ່ອງຫວ່າງດ້ານສິດຂອງເຈົ້າຂອງຂໍ້ມູນ ແລະ ກົນໄກປະຕິບັດ (ມິຕິ 3):** ສະພາແຫ່ງຊາດ. (2017a) ຮັບຮອງສິດພື້ນຖານ (ມາດຕາ 18, 19, 20, 27) ແຕ່ຍັງຂາດ ສິດໃນການໂອນຍ້າຍຂໍ້ມູນ (Data Portability), ຂາດຂັ້ນຕອນການຮ້ອງຂໍໃຊ້ສິດ ແລະ ເສັ້ນຕາຍ (Timeframe) ໃນການຕອບສະໜອງຂອງຜູ້ຄວບຄຸມຂໍ້ມູນ (ຂະນະທີ່ GDPR ກຳນົດ 30 ວັນ, ໄທ 30 ວັນ ແລະ ອິນໂດເນເຊຍ 3x24 ຊົ່ວໂມງ ສຳລັບການແກ້ໄຂ/ເຂົ້າເຖິງ).

4. **ຊ່ອງຫວ່າງດ້ານພັນທະແຈ້ງເຫດຂໍ້ມູນຮົ່ວໄຫຼ ແລະ ການໂອນຂໍ້ມູນຂ້າມແດນ (ມິຕິ 4):** ສະພາແຫ່ງຊາດ. (2017a) ມາດຕາ 26 ຂໍ້ 2 ລະບຸພຽງການຂໍຄວາມຊ່ວຍເຫຼືອຈາກ LaoCERT ເມື່ອແກ້ໄຂບັນຫາບໍ່ໄດ້ ແລະ ກົດໝາຍປີ 2025 ເນັ້ນການລາຍງານເຫດສຸກເສີນດ້ານຄວາມໝັ້ນຄົງລະບົບ, ແຕ່ຍັງບໍ່ມີ ພັນທະບັງຄັບແຈ້ງເຫດຂໍ້ມູນສ່ວນບຸກຄົນຮົ່ວໄຫຼ (Mandatory Data Breach Notification) ພາຍໃນ 72 ຊົ່ວໂມງ ຕໍ່ອົງການກຳກັບດູແລ ແລະ ເຈົ້າຂອງຂໍ້ມູນ ຄືດັ່ງ GDPR (Art. 33-34), ໄທ (PDPA ມາດຕາ 37) ແລະ ອິນໂດເນເຊຍ (UU PDP ມາດຕາ 46). ພ້ອມກັນນັ້ນ, ມາດຕາ 17 ຂອງກົດໝາຍປີ 2017 ຍັງຂາດເກນການປະເມີນຄວາມພຽງພໍຂອງປະເທດປາຍທາງ (Adequacy Decision) ຫຼື ຂໍ້ສັນຍາມາດຕະຖານ (ASEAN Model Contractual Clauses - MCCs) ສຳລັບການສົ່ງຂໍ້ມູນນັກທ່ອງທ່ຽວຂ້າມແດນ.

5. **ຊ່ອງຫວ່າງດ້ານໂຄງສ້າງການກຳກັບດູແລ ແລະ ການເຂົ້າເຖິງຂໍ້ມູນຂອງລັດ (ມິຕິ 5):** ສະພາແຫ່ງຊາດ 2017a. (ມາດຕາ 40) ມອບໃຫ້ກະຊວງເຕັກໂນໂລຊີ ແລະ ການສື່ສານ ຄຸ້ມຄອງລວມສູນ, ແຕ່ຍັງຂາດອົງການກຳກັບດູແລການປົກປ້ອງຂໍ້ມູນສ່ວນບຸກຄົນທີ່ເປັນເອກະລາດ (Independent DPA) ຄືກັບ PDPC ຂອງໄທ ຫຼື ອົງການ PDP ຂອງອິນໂດເນເຊຍ, ຂາດໜ່ວຍງານປະສານງານຂັ້ນແຂວງ (Provincial Focal Point), ຂາດກົນໄກປັບໃໝທາງປົກຄອງທີ່ໄດ້ສັດສ່ວນ ແລະ ມາດຕາ 16 ວັກ 2 ຍັງບໍ່ໄດ້ກຳນົດຂັ້ນຕອນພິທີ ການ (Safeguards) ເຊັ່ນ ໝາຍສານ ຫຼື ການບັນທຶກການເຂົ້າເຖິງ (Access Logs) ເມື່ອເຈົ້າໜ້າທີ່ລັດຮ້ອງຂໍຂໍ້ມູນ.

ຕາຕະລາງທີ 2: ການປຽບທຽບກອບກົດໝາຍປົກປ້ອງຂໍ້ມູນຂອງ ສປປ ລາວ ກັບ ເກນສາກົນ ແລະ ພາກພື້ນ

ມິຕິການວິເຄາະ	ສປປ ລາວ (ກົດໝາຍ 2017 & 2025)	GDPR(EU 2016/679)	ກອບອາຊຽນ (ASEAN PDP, 2016)	ໄທ (PDPA, 2019)	ອິນໂດເນເຊຍ (UU PDP, 2022)
1. ຂອບເຂດ & ນິຍາມ	ສະເພາະຂໍ້ມູນເອເລັກໂຕຣນິກ; ບໍ່ແຍກ Controller/Processor; ບໍ່ມີນິຍາມ Sensitive Data	ທຸກຮູບແບບ (ດິຈິຕອນ & ເຈ້ຍ); ແຍກ Controller/ Processor; ຄຸ້ມຄອງ Sensitive Data ເຂັ້ມງວດ	ກວມຂໍ້ມູນສ່ວນບຸກຄົນທົ່ວໄປ; ເນັ້ນຄວາມຍືດຢຸ່ນຕາມບໍລິບົດປະເທດສະມາຊິກ	ທຸກຮູບແບບ (ດິຈິຕອນ & ເຈ້ຍ); ແຍກ Controller/ Processor; ຄຸ້ມຄອງຂໍ້ມູນອ່ອນໄຫວ (ມ.26)	ທຸກຮູບແບບ (ດິຈິຕອນ & ເຈ້ຍ); ແຍກ Controller /Processor; ຄຸ້ມຄອງຂໍ້ມູນສະເພາະ (ມ.4)
2. ຄວາມໂປ່ງໃສ & ຄວາມຍິນຍອມ	ກຳນົດໃຫ້ຂໍອະນຸຍາດ (ມ.12, 16) ແຕ່ຂາດຫຼັກການ Unbundled Consent ແລະ ຖານກົດໝາຍອື່ນ	ຍິນຍອມອິດສະຫຼະ, ຊັດເຈນ, ແຍກຈຸດປະສົງ (Art. 7) ແລະ ມີ 6 ຖານກົດໝາຍ (Art. 6)	ຫຼັກການ Consent & Notification ກ່ອນຫຼືຂະນະເກັບກຳຂໍ້ມູນ	ຍິນຍອມຊັດເຈນ, ແຍກຈາກເງື່ອນໄຂອື່ນ (ມ.19) ແລະ ມີ 7 ຖານກົດໝາຍ (ມ.24)	ຍິນຍອມຊັດເຈນເປັນລາຍລັກອັກສອນ/ບັນທຶກໄດ້ (ມ. 20) ພ້ອມຖານກົດໝາຍອື່ນ
3. ສິດຂອງເຈົ້າຂອງຂໍ້ມູນ	ຮັບຮອງສິດພື້ນຖານ (ມ.18-20, 27) ແຕ່ຂາດ Data Portability ແລະ ເສັ້ນຕາຍຕອບສະໜອງ	ຄົບ 8 ສິດ ລວມທັງ Data Portability & Right to be Forgotten (ຕອບພາຍໃນ 30 ວັນ)	ຮັບຮອງສິດເຂົ້າເຖິງ ແລະ ແກ້ໄຂຂໍ້ມູນສ່ວນບຸກຄົນ	ຄົບທຸກສິດ ລວມທັງໂອນຍ້າຍ ແລະ ລຶບຖ້ານ (ຕອບພາຍໃນ 30 ວັນ)	ຄົບທຸກສິດ ລວມທັງໂອນຍ້າຍ ແລະ ລຶບຂໍ້ມູນ (ກຳນົດເວລາ 3x24 ຊົ່ວໂມງ ສຳລັບບາງສິດ)
4. ຄວາມປອດໄພ & ແຈ້ງເຫດຮົ່ວໄຫຼ	ເນັ້ນຄວາມປອດໄພລະບົບ (ກົດໝາຍ 2025); ຂາດພັນທະແຈ້ງເຫດຮົ່ວໄຫຼ ແລະ ກົນໄກ ASEAN MCCs	ບັງຄັບແຈ້ງ DPA ພາຍໃນ 72 ຊົ່ວໂມງ (Art. 33); ມີກົນໄກ Adequacy & SCCs	ກຳນົດມາດຕະ ການ ຄວາມປອດໄພ ແລະ ສະໜັບສະໜຸນ ASEAN MCCs ສຳລັບຂ້າມແດນ	ບັງຄັບແຈ້ງ PDPC ພາຍໃນ 72 ຊົ່ວໂມງ (ມ.37); ມີກົນໄກໂອນຂ້າມແດນ (ມ.28-29)	ບັງຄັບແຈ້ງ DPA ແລະ ເຈົ້າຂອງຂໍ້ມູນພາຍໃນ 3x24 ຊົ່ວໂມງ (ມ.46)
5. ໂຄງສ້າງການກຳກັບ & ລົງໂທດ	ກະຊວງ ຕສ ຄຸ້ມຄອງ ລວມສູນ; ຂາດ DPA ເອກະລາດ, ຂາດໜ່ວຍງານແຂວງ ແລະ ໂທດປັບໃໝທາງປົກຄອງ	ມີ DPA ເອກະລາດ; ໂທດປັບໃໝທາງປົກຄອງສູງສຸດ 20 ລ້ານ ເອີໂຣ ຫຼື 4% ຂອງລາຍຮັບ	ແນະນຳໃຫ້ມີກົນໄກຮັບເລື່ອງຮ້ອງ ທຸກ ແລະ ບັງຄັບໃຊ້ທີ່ເໝາະສົມ	ມີຄະນະກຳມະການ PDPC ເອກະລາດ; ໂທດປັບໃໝທາງປົກ ຄອງສູງສຸດ 5 ລ້ານ ບາດ	ມີອົງການ PDP ຂຶ້ນກັບປະທານາ ທິບໍດີ; ໂທດປັບໃໝທາງປົກຄອງສູງສຸດ 2% ຂອງລາຍຮັບຕໍ່ປີ

ໝາຍເຫດ: *GDPR = ລະບຽບການປົກປ້ອງຂໍ້ມູນທົ່ວໄປຂອງ EU; ASEAN PDP = ກອບການປົກປ້ອງຂໍ້ມູນສ່ວນບຸກຄົນອາຊຽນ; PDPA = ພ.ຣ.ບ. ຄຸ້ມຄອງຂໍ້ມູນສ່ວນບຸກຄົນຂອງໄທ; UU PDP = ກົດໝາຍປົກປ້ອງຂໍ້ມູນສ່ວນບຸກຄົນຂອງອິນໂດເນເຊຍ; Controller = ຜູ້ຄວບຄຸມຂໍ້ມູນ; Processor = ຜູ້ປະມວນຜົນຂໍ້ມູນ; Sensitive Data = ຂໍ້ມູນອ່ອນໄຫວ; Unbundled Consent = ການຂໍຄວາມຍິນຍອມແບບແຍກຈຸດປະສົງ; Data Portability = ສິດໂອນຍ້າຍຂໍ້ມູນ; Right to be Forgotten = ສິດຂໍໃຫ້ລຶບຂໍ້ມູນ; DPA = ອົງການກຳກັບດູແລການປົກປ້ອງຂໍ້ມູນສ່ວນບຸກຄົນ; PDPC = ຄະນະກຳມະການຄຸ້ມຄອງຂໍ້ມູນສ່ວນບຸກຄົນຂອງໄທ; ASEAN MCCs / SCCs = ຂໍ້ສັນຍາມາດຕະຖານການໂອນຂໍ້ມູນຂ້າມແດນຂອງອາຊຽນ ແລະ EU; Adequacy = ການປະເມີນຄວາມພຽງພໍຂອງປະເທດປາຍທາງ; ກະຊວງ ຕສ = ກະຊວງເຕັກໂນໂລຊີ ແລະ ການສື່ສານ; Art. / ມ. = ມາດຕາ.*

3.2 ສິ່ງທ້າທາຍທາງກົດໝາຍ ແລະ ຂໍ້ຈຳກັດໃນການບັງຄັບໃຊ້ໃນຂະແໜງໂຮງແຮມ ແລະ ທ່ອງທ່ຽວ ແຂວງຫຼວງພະບາງ ຈາກການສຳພາດ

ຜົນການວິເຄາະຂໍ້ມູນຈາກການສຳພາດຜູ້ປະກອບການໂຮງແຮມ 8 ແຫ່ງ (H01-H08), ບໍລິສັດທ່ອງທ່ຽວ 5 ແຫ່ງ (T01–T05) ແລະ ເຈົ້າໜ້າທີ່ພາກລັດ 3 ທ່ານ (G01-G03) ສະທ້ອນໃຫ້ເຫັນຊ່ອງຫວ່າງລະຫວ່າງ *"ກົດໝາຍໃນຕົວບົດ (Law in Books)"* ກັບ *"ກົດໝາຍໃນພາກປະຕິບັດ (Law in Action)"* ຢ່າງຊັດເຈນ ເຊິ່ງສາມາດສັງເຄາະອອກເປັນ 5 ສິ່ງທ້າທາຍ ແລະ ຂໍ້ຈຳກັດຫຼັກ ດັ່ງນີ້ (ຕາຕະລາງທີ 3):

ຕາຕະລາງທີ 3: ລະດັບພາກປະຕິບັດຕາມກຸ່ມ ແລະ ມິຕິ (ຈຳນວນຜູ້ໃຫ້ສຳພາດ)

ກຸ່ມຕົວຢ່າງ (n)	ການແຈ້ງຈຸດປະສົງ	ການຂໍຄວາມຍິນຍອມ	ການເກັບຮັກສາ ແລະ ລຶບຂໍ້ມູນ	ມາດຕະການຄວາມປອດໄພ	ການແບ່ງປັນຂໍ້ມູນ (ສັນຍາ)
ໂຮງແຮມ (n=8)	ສູງ 1 / ກາງ 7 / ຕ່ຳ 0	ສູງ 1 / ກາງ 6 / ຕ່ຳ 1	ສູງ 0 / ກາງ 1 / ຕ່ຳ 7	ສູງ 3 / ກາງ 4 / ຕ່ຳ 1	ສູງ 3 / ກາງ 3 / ຕ່ຳ 2
ບໍລິສັດທ່ອງທ່ຽວ (n=5)	ສູງ 1 / ກາງ 4 / ຕ່ຳ 0	ສູງ 0 / ກາງ 5 / ຕ່ຳ 0	ສູງ 0 / ກາງ 0 / ຕ່ຳ 5	ສູງ 2 / ກາງ 2 / ຕ່ຳ 1	ສູງ 2 / ກາງ 1 / ຕ່ຳ 2
ລວມທັງໝົດ (n=13)	ສູງ 2 (15.4%) ກາງ 11 (84.6%) ຕ່ຳ 0 (0%)	ສູງ 1 (7.7%) ກາງ 11 (84.6%) ຕ່ຳ 1 (7.7%)	ສູງ 0 (0%) ກາງ 1 (7.7%) ຕ່ຳ 12 (92.3%)	ສູງ 5 (38.5%) ກາງ 6 (46.2%) ຕ່ຳ 2 (15.4%)	ສູງ 5 (38.5%) ກາງ 4 (30.8%) ຕ່ຳ 4 (30.8%)

ໝາຍເຫດ: ເກນປະເມີນ 5 ເງື່ອນໄຂ (ເອກະສານຂັ້ນຕອນ, ແຈ້ງຈຸດປະສົງ, ຂໍຄວາມຍິນຍອມ, ຈຳກັດສິດເຂົ້າເຖິງ, ໄລຍະເວລາເກັບ/ລຶບ): ສູງ = 4–5 ເງື່ອນໄຂ; ກາງ = 2–3 ເງື່ອນໄຂ; ຕ່ຳ = 0–1 ເງື່ອນໄຂ.

- **ການເກັບກຳຂໍ້ມູນແບບປະສົມ (Hybrid) ທີ່ເຮັດໃຫ້ເອກະສານເຈ້ຍຢູ່ນອກຂອບເຂດກົດໝາຍ:** ຜູ້ປະກອບການ 100% (13/13 ແຫ່ງ) ເກັບກຳຂໍ້ມູນນັກທ່ອງທ່ຽວທັງໃນຮູບແບບດິຈິຕອນ (ລະບົບ PMS, OTA, Excel, WhatsApp) ແລະ ເອກະສານເຈ້ຍ (ສຳເນົາໜັງສືຜ່ານແດນ, ປຶ້ມແຈ້ງພັກ) ຄຽງຄູ່ກັນ ເພື່ອຕອບສະໜອງລະບຽບການແຈ້ງພັກຂອງເຈົ້າໜ້າທີ່ທ້ອງຖິ່ນ. ພຶດຕິກຳດັ່ງກ່າວເຮັດໃຫ້ຂໍ້ມູນສ່ວນບຸກຄົນຈຳນວນຫຼາຍຖືກວາງໄວ້ໃນແຟ້ມບໍລິເວນເຄົາເຕີຕ້ອນຮັບໂດຍບໍ່ໄດ້ຮັບການຄຸ້ມຄອງຈາກກົດໝາຍປີ 2017:
"ເວລາແຂກເຊັກອິນ ພວກເຮົາຕ້ອງຖ່າຍເອກະສານ Passport ເກັບໄວ້ໃນແຟ້ມເຈ້ຍເພື່ອກຽມໃຫ້ເຈົ້າໜ້າທີ່ກວດ ພ້ອມທັງພິມຂໍ້ມູນລົງໃນ Excel ຄຽງຄູ່ກັນ" H04.
- **ການຂາດນະໂຍບາຍຄວາມເປັນສ່ວນຕົວເປັນລາຍລັກອັກສອນ ແລະ ການຂໍຄວາມຍິນຍອມແບບບໍ່ເປັນທາງການ:**

ຜູ້ປະກອບການ 84.6% (11/13 ແຫ່ງ) ບໍ່ມີນະໂຍບາຍຄວາມເປັນສ່ວນຕົວ (Privacy Policy) ເປັນລາຍລັກອັກສອນ ໂດຍມີພຽງໂຮງແຮມເຄືອຂ່າຍສາກົນ 1 ແຫ່ງ (H01) ແລະ ບໍລິສັດທ່ອງທ່ຽວ 1 ແຫ່ງ (T01) ທີ່ຈັດທຳຢ່າງຄົບຖ້ວນ. ທຸລະກິດສ່ວນໃຫຍ່ໃຊ້ວິທີແຈ້ງປາກເປົ່າ ແລະ ໃຫ້ແຂກເຊັນຊື່ລວມໃນໃບລົງທະບຽນໃບດຽວ (84.6%); ຂະນະທີ່ບໍລິສັດທ່ອງທ່ຽວ 80% (4/5 ແຫ່ງ) ຂໍອະນຸຍາດຖ່າຍຮູບ ຫຼື ວິດີໂອລູກຄ້າເພື່ອໂຄສະນາລົງສື່ສັງຄົມອອນລາຍແບບປາກເປົ່າ:
"ສ່ວນຫຼາຍແມ່ນບອກແຂກດ້ວຍປາກເປົ່າວ່າຂໍ Passport ໄປແຈ້ງພັກຕາມລະບຽບ ແລະ ໃຫ້ແຂກເຊັນຊື່ໃນໃບລົງທະບຽນໃບດຽວເລີຍ" H06. *"ເວລາພາແຂກໄປຫ້ອ ພະນັກງານນຳທ່ຽວກໍຈະຖາມປາກເປົ່າວ່າ ຂໍຖ່າຍຮູບລົງ Facebook ຂອງບໍລິສັດໄດ້ບໍ່, ແຂກສ່ວນຫຼາຍກໍບໍ່ໄດ້ ປະຕິເສດ"* T03.
- **ການເກັບສະສົມຂໍ້ມູນໄວ້ໂດຍບໍ່ມີກຳນົດເວລາລຶບທຳລາຍ ແລະ ຂາດກົນໄກຮອງຮັບສິດ**

ຜູ້ປະກອບການ 92.3% (12/13 ແຫ່ງ) ຢູ່ໃນລະດັບ "ຕ່ຳ" ດ້ານການເກັບຮັກສາ ແລະ ລຶບຂໍ້ມູນ ເນື່ອງຈາກບໍ່ຮູ້ເກນໄລຍະເວລາເກັບຮັກ ສາຕາມກົດໝາຍ ແລະ ເກັບສະສົມຂໍ້ມູນລູກຄ້າເກົ່າໄວ້ທັງໃນຄອມພິວເຕີ ແລະ ແຟ້ມເຈ້ຍຢ່າງບໍ່ມີກຳນົດ. ພ້ອມກັນນັ້ນ, 100% (13/13 ແຫ່ງ) ຍັງບໍ່ມີຊ່ອງທາງຮອງຮັບການໃຊ້ສິດໂອນຍ້າຍຂໍ້ມູນ, ສິດຄັດຄ້ານ ຫຼື ການຮ້ອງ ທຸກສະເພາະ:
"ຂໍ້ມູນລູກຄ້າເກົ່າໃນຄອມພິວເຕີ ແລະ ເອກະສານເຈ້ຍກໍເກັບໄວ້ຕະຫຼອດ ເພາະບໍ່ຮູ້ວ່າຕ້ອງເກັບໄວ້ຈັກປີຈຶ່ງຈະລຶບໄດ້ ແລະ ກໍບໍ່ເຄີຍມີແຂກຄົນໃດມາຂໍໃຫ້ລຶບຂໍ້ມູນ" H05.
- **ຄວາມສ່ຽງຈາກການນຳໃຊ້ອຸປະກອນສ່ວນຕົວ (BYOD) ແລະ ຄວາມແຕກຕ່າງຕາມຂະໜາດທຸລະກິດ:**

ທຸລະກິດ 61.5% (8/13 ແຫ່ງ) ອະນຸຍາດໃຫ້ພະນັກງານໃຊ້ບັນຊີ WhatsApp ຫຼື WeChat ສ່ວນຕົວໃນການຮັບ-ສົ່ງຮູບພາບໜັງສືຜ່ານແດນຂອງລູກຄ້າເພື່ອຄວາມສະດວກໃນການປະສານງານຈອງປີ້ລົດໄຟ ຫຼື ແຈ້ງປະກັນໄພ. ເມື່ອຈຳແນກຕາມຂະໜາດທຸລະກິດ, ໂຮງແຮມຂະໜາດໃຫຍ່ 4-5 ດາວ (H01-H02) ມີຄວາມພ້ອມສູງກວ່າດ້ານລະບົບ PMS ທີ່ຈຳກັດສິດການເຂົ້າເຖິງ (Role-based Access) ແລະ ສັນຍາຮັກສາຄວາມລັບ (NDA/DPA) ກັບຄູ່ຮ່ວມທຸລະກິດ; ໃນຂະນະທີ່ໂຮງແຮມຂະໜາດກາງ (H03-H05) ແລະ ຂະໜາດນ້ອຍ/ບູຕິກ (H06-H08) ປະເຊີນຂໍ້ຈຳກັດດ້ານງົບປະມານຈັດຊື້ຊອບແວທີ່ປອດໄພ ແລະ ຂາດບຸກຄະລາກອນດ້ານໄອທີ:
"ເວລາລູກຄ້າຈອງທົ່ວດ່ວນ ພະນັກງານມັກໃຫ້ລູກຄ້າສົ່ງຮູບ Passport ຜ່ານ WhatsApp ສ່ວນຕົວ ເພື່ອຄວາມສະດວກໃນການແຈ້ງປະກັນໄພ ແລະ ຈອງປີ້ລົດໄຟ" T02. *"ພວກເຮົາໃຊ້ລະບົບ PMS ຂອງເຄືອຂ່າຍ*

ໂຮງແຮມ ທີ່ມີການຈຳກັດສິດການເຂົ້າເຖິງຕາມຕຳແໜ່ງ ແລະ ມີສັນຍາ ຮັກສາຄວາມລັບກັບຄູ່ຮ່ວມທຸລະກິດ" H01.

- **ຂໍ້ຈຳກັດດ້ານການກຳກັບດູແລ ແລະ ການບັງຄັບໃຊ້ຂອງພາກ ລັດຂັ້ນແຂວງ**

ເຈົ້າໜ້າທີ່ພາກລັດ 100% (3/3 ຫ້ວໜ່ວຍ) ຢືນຢັນວ່າການ ບັງຄັບໃຊ້ກົດໝາຍຢູ່ຂັ້ນແຂວງຍັງມີຂໍ້ຈຳກັດຫຼາຍດ້ານ ຄື: (ກ) ຂາດ ໜ່ວຍງານປະສານງານຫຼັກ (Provincial Focal Point) ແລະ ຊ່ອງ ທາງຮັບເລື່ອງຮ້ອງທຸກສະເພາະດ້ານຂໍ້ມູນສ່ວນບຸກຄົນ; (ຂ) ຂາດທີມ ງານກວດກາ (Compliance Audit), ງົບປະມານ ແລະ ຄູ່ມືແນະນຳ ສະເພາະສຳລັບຂະແໜງທ່ອງທ່ຽວ; ແລະ (ຄ) ການລົງກວດກາທຸລະກິດ ໃນປັດຈຸບັນຍັງເນັ້ນໃສ່ມາດຕະຖານການບໍລິການທ່ອງທ່ຽວ ແລະ ຄວາມໝັ້ນຄົງລະບົບທົ່ວໄປ ໂດຍຍັງບໍ່ມີເກນປະເມີນດ້ານຄວາມເປັນ ສ່ວນຕົວ:

"ປັດຈຸບັນ ພວກເຮົາຍັງບໍ່ມີທີມງານກວດກາສະເພາະດ້ານການປົກປ້ອງ ຂໍ້ມູນສ່ວນບຸກຄົນ ແລະ ຍັງຂາດຄູ່ມືແນະ ນຳຂັ້ນທ້ອງຖິ່ນ ເຮັດໃຫ້ການ ຕິດຕາມສ່ວນຫຼາຍເນັ້ນໃສ່ຄວາມປອດໄພລະບົບທົ່ວໄປ" G01. *"ການ ກວດກາທຸ ລະກິດທ່ອງທ່ຽວສ່ວນຫຼາຍແມ່ນກວດກາດ້ານມາດຕະຖານ ການບໍລິການ ແລະ ການຂຶ້ນທະບຽນແຂກ ຍັງບໍ່ທັນມີເກນປະເມີນດ້ານ ຄວາມເປັນສ່ວນຕົວຂອງຂໍ້ມູນລູກຄ້າ"* G02.

3.3 ແນວທາງການພັດທະນານິຕິກຳ ແລະ ກົນໄກບັງຄັບໃຊ້ ໂດຍອີງໃສ່ ຊ່ອງຫວ່າງ, ການປຽບທຽບພາກພື້ນ ແລະ ຄວາມເຫັນຂອງຜູ້ໃຫ້ສຳພາດ

ໂດຍສັງເຄາະຈາກຊ່ອງຫວ່າງທາງກົດໝາຍ 5 ປະການ, ບົດຮຽນການ ບັງຄັບໃຊ້ໃນພາກພື້ນ (GDPR, ກອບອາ ຊຽນ, PDPA ຂອງໄທ ແລະ UU PDP ຂອງອິນໂດເນເຊຍ) ລວມທັງຄວາມຕ້ອງການຕົວຈິງ ຂອງຜູ້ປະກອບການ SMEs ແລະ ເຈົ້າໜ້າທີ່ຂັ້ນແຂວງ, ຜົນການສຶກ ສາໄດ້ສະເໜີແນວທາງການພັດທະນານິຕິກຳ ແລະ ກົນໄກບັງຄັບໃຊ້ທີ່ ສົມເຫດສົມຜົນ (Proportionate Regulatory Model) ແບ່ງອອກ ເປັນ 3 ລະດັບ ດັ່ງນີ້ (ຕາຕະລາງທີ 4):

1. ລະດັບນະໂຍບາຍ ແລະ ນິຕິກຳແຫ່ງຊາດ (Legislative Reform):

ຮ່າງກົດໝາຍແມ່ບົດວ່າດ້ວຍການປົກປ້ອງຂໍ້ມູນສ່ວນບຸກຄົນ (PDPA) ແບບຄົບວົງຈອນ: ຂະຫຍາຍຂອບເຂດໃຫ້ຄຸ້ມຄອງຂໍ້ມູນ ສ່ວນບຸກຄົນທັງໃນຮູບແບບດິຈິຕອນ ແລະ ເອກະສານເຈ້ຍ (ຖອດ ບົດຮຽນຈາກ PDPA ໄທ ແລະ UU PDP ອິນໂດເນເຊຍ), ແຍກ ບົດບາດ Data Controller ອອກຈາກ Data Processor ຢ່າງຊັດ ເຈນ ແລະ ກຳນົດມາດຕະການຄຸ້ມຄອງພິເສດສຳລັບ ຂໍ້ມູນອ່ອນໄຫວ (Sensitive Data).

ບັນຍັດພັນທະແຈ້ງເຫດຂໍ້ມູນຮົ່ວໄຫຼ ແລະ ກົນໄກຂ້າມແດນ: ກຳນົດ ໃຫ້ຜູ້ຄວບຄຸມຂໍ້ມູນຕ້ອງແຈ້ງເຫດຂໍ້ມູນສ່ວນບຸກຄົນຮົ່ວໄຫຼຕໍ່ອົງການ ກຳກັບດູແລ ແລະ ເຈົ້າຂອງຂໍ້ມູນພາຍໃນ 72 ຊົ່ວໂມງ (ສອດຄ່ອງກັບ GDPR, ໄທ ແລະ ອິນໂດເນເຊຍ) ພ້ອມທັງຮັບຮອງການນຳໃຊ້ ASEAN Model Contractual Clauses (MCCs) ເພື່ອອຳນວຍ ຄວາມສະດວກໃຫ້ແກ່ທຸລະກິດທ່ອງທ່ຽວໃນການສົ່ງຂໍ້ມູນຂ້າມແດນ ຢ່າງຖືກກົດໝາຍ.

ສ້າງຕັ້ງອົງການກຳກັບດູແລ (DPA) ແລະ ກຳນົດຜົນທີການເຂົ້າເຖິງຂໍ້ ມູນຂອງລັດ: ສ້າງຕັ້ງອົງການກຳກັບດູແລການປົກປ້ອງຂໍ້ມູນສ່ວນ ບຸກຄົນທີ່ມີຄວາມເປັນເອກະລາດໃນການຕິດຕາມ-ກວດກາ ແລະ ປັບໃ ໝ່ທາງປົກຄອງ; ພ້ອມທັງອອກລະບຽບການກ່ຽວກັບຂັ້ນຕອນ ແລະ ຫຼັກຖານ (ເຊັ່ນ ໜັງສືທາງການ ຫຼື ໝາຍສານ ແລະ ການບັນທຶກ Access Logs) ໃນການຮ້ອງຂໍຂໍ້ມູນແຂກຈາກໜ່ວຍງານລັດ ເພື່ອ ຫຼຸດຜ່ອນການຖ່ວງສຳເນົາເອກະສານເຈ້ຍຊ້ຳຊ້ອນ.

2. ລະດັບການບັງຄັບໃຊ້ ແລະ ການປະສານງານຂັ້ນແຂວງ (Provincial Governance & Support):

ສ້າງຕັ້ງຈຸດປະສານງານຂັ້ນແຂວງ (Provincial Focal Point) ແລະ ຊ່ອງທາງຮ້ອງທຸກ: ມອບໝາຍໃຫ້ພະແນກເຕັກໂນໂລຊີ ແລະ ການ ສື່ສານແຂວງ ເປັນໃຈກາງປະສານງານຮ່ວມກັບພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ເຈົ້າໜ້າທີ່ຕຳຫຼວດທ່ອງທ່ຽວ ໃນ ການສ້າງຊ່ອງທາງຮັບເລື່ອງຮ້ອງທຸກ 2 ພາສາ (ລາວ-ອັງກິດ) ສຳລັບ ນັກທ່ອງທ່ຽວ.

ອອກຄູ່ມືປະຕິບັດ (Sectoral Toolkit) ແລະ ແບບຟອມມາດຕະຖານ 3 ພາສາ: ພັດທະນາຄູ່ມືແນະນຳທີ່ເຂົ້າ ໃຈງ່າຍສະເພາະຂະແໜງໂຮງ ແຮມ ແລະ ທ່ອງທ່ຽວ (ຖອດບົດຮຽນຈາກບັນຫາ *compliance burden* ຂອງ SMEs ໃນໄທ) ພ້ອມແຈກຢາຍແມ່ແບບ *Privacy Notice* ແລະ *ແບບຟອມຂໍຄວາມຍິນຍອມ* 3 ພາສາ (ລາວ, ອັງກິດ, ຈີນ) ເພື່ອຫຼຸດຕົ້ນທຶນໃຫ້ທຸລະກິດຂະໜາດນ້ອຍ.

ບູລະນະການກວດກາ ແລະ ຝຶກອົບຮົມ: ນຳເອົາເກນປະເມີນຄວາມ ປອດໄພຂໍ້ ມູນຂັ້ນພື້ນຖານເຂົ້າເປັນສ່ວນໜຶ່ງຂອງການກວດກາ ມາດຕະຖານໂຮງແຮມ ແລະ ບໍລິສັດທ່ອງທ່ຽວປະຈຳປີ ຄຽງຄູ່ກັບການ ຝຶກອົບຮົມໃຫ້ເຈົ້າໜ້າທີ່ກວດ ກາ ແລະ ສະມາຄົມໂຮງແຮມ-ຮ້ານ ອາຫານແຂວງຫຼວງພະບາງ.

3. ລະດັບການປະຕິບັດຂອງຜູ້ປະກອບການ SMEs (Practical Business Measures):

ປັບປຸງຂັ້ນຕອນການແຈ້ງ ແລະ ຂໍຄວາມຍິນຍອມ (Notice & Unbundled Consent): ຕິດປະກາດ *Privacy Notice* ຢູ່ຈຸດເຊັກ ອິນ ແລະ ເວັບໄຊ, ພ້ອມທັງແຍກຊ່ອງໝາຍຕິກຂໍຄວາມຍິນຍອມ (Opt-in) ສຳລັບການຖ່າຍຮູບໂຄສະນາ ຫຼື ການສົ່ງຂໍ້ມູນການຕະຫຼາດ ອອກຈາກໃບລົງທະບຽນເຂົ້າພັກ.

ຍົກເລີກການສົ່ງຂໍ້ມູນຜ່ານບັນຊີສ່ວນຕົວ (BYOD Control) ແລະ ຍົກລະດັບຄວາມປອດໄພ: ປ່ຽນມາໃຊ້ບັນຊີທາງການຂອງທຸລະ ກິດ (Business Account/Email) ທີ່ເປີດໃຊ້ງານການຢືນຢັນຕົວຕົນ 2 ຊັ້ນ (2FA), ຈຳກັດສິດການເຂົ້າເຖິງຝາຍຂໍ້ມູນລູກຄ້າສະເພາະ ພະນັກງານທີ່ກ່ຽວຂ້ອງ ແລະ ລຶບຮູບພາບໜັງສືຜ່ານແດນອອກຈາກ ແອັບສົນທະ ນາທັນທີຫຼັງຈາກດຳເນີນການສຳເລັດ.

ຈັດການເອກະສານເຈ້ຍ ແລະ ກຳນົດຮອບວຽນການລຶບ ທຳລາຍ (Data Retention Schedule): ເກັບຮັກສາແຟ້ມເອກະສານ ເຈ້ຍໃນຕູ້ທີ່ມີກະແຈລັອກມິດຊິດ (ບໍ່ວາງປະໄວ້ເທິງເຄົ້າເຕ) ແລະ ກຳນົດຮອບວຽນການທຳລາຍເອກະ ສານເຈ້ຍ (ດ້ວຍເຄື່ອງຍ່ອຍເຈ້ຍ) ແລະ ລຶບຂໍ້ມູນດິຈິຕອນທີ່ໝົດຄວາມຈຳເປັນທາງກົດໝາຍ/ບັນຊີ.

ຕາຕະລາງທີ 4: ສະຫຼຸບແນວທາງການພັດທະນານິຕິກຳ ແລະ ກົນໄກບັງຄັບໃຊ້ທີ່ສອດຄ່ອງກັບຜົນການສຶກສາ

ລະດັບການດຳເນີນການ	ແນວທາງ ແລະ ມາດຕະການສະເໜີ	ຊ່ອງຫວ່າງ/ບັນຫາທີ່ຕ້ອງແກ້ໄຂ	ໜ່ວຍງານຮັບຜິດຊອບຫຼັກ	ໄລຍະເວລາ
1. ລະດັບຊາດ (ນິຕິກຳ ແລະ ສະຖາບັນ)	- ຮ່າງກົດໝາຍ PDPA ໃຫ້ກວມລວມຂໍ້ມູນເຈ້ຍ ແລະ ຂໍ້ມູນອ່ອນໄຫວ - ບັນຍັດພັນທະແຈ້ງເຫດຮົ່ວໄຫຼ 72 ຊົ່ວໂມງ ແລະ ຮັບຮອງ ASEAN MCCs - ສ້າງຕັ້ງອົງການ DPA ເອກະລາດ ແລະ ກຳນົດພິທີການຂໍຂໍ້ມູນຂອງພາກລັດ	ກົດໝາຍກະແຈກກະຈາຍ, ຂໍ້ມູນເຈ້ຍຢູ່ນອກຂອບເຂດ, ຂາດກົນໄກແຈ້ງເຫດຮົ່ວໄຫຼ ແລະ ຂາດອົງການ DPA	ສະພາແຫ່ງຊາດ, ກະຊວງເຕັກໂນໂລຊີ ແລະ ການສື່ສານ, ກະຊວງຍຸຕິທຳ	ໄລຍະກາງ - ຍາວ (2-5 ປີ)
2. ລະດັບແຂວງ (ການບັງຄັບໃຊ້ ແລະ ສະໜັບສະໜຸນ)	- ສ້າງຕັ້ງ Provincial Focal Point ແລະ ຊ່ອງທາງຮ້ອງທຸກ 2 ພາສາ (ລາວ-ອັງກິດ) - ອອກຄູ່ມື SMEs ແລະ ແບບຟອມມາດຕະຖານ 3 ພາສາ (ລາວ-ອັງກິດ-ຈີນ) - ບູລະນະການເກນກວດກາ ແລະ ຝຶກອົບຮົມພະນັກງານ	ຂາດໜ່ວຍງານປະສານງານແຂວງ, ຂາດຄູ່ມື ແລະ ຂາດທີມງານກວດກາ (G01-G03)	ພະແນກ ຕສ ແຂວງ, ພະແນກ ຖວທ ແຂວງ, ສະມາຄົມທຸລະກິດ	ໄລຍະສັ້ນ -ກາງ (6-18 ເດືອນ)
3. ລະດັບທຸລະກິດ (ພາກປະຕິບັດ SMEs)	- ນຳໃຊ້ Privacy Notice ແລະ ແຍກຊ່ອງຂໍຄວາມຍິນຍອມ (Opt-in) - ຢຸດໃຊ້ WhatsApp ສ່ວນຕົວ (BYOD) ແລະ ເປີດໃຊ້ງານ 2FA - ລ້ອກຕູ້ເກັບເອກະສານເຈ້ຍ ແລະ ກຳນົດຮອບວຽນການລຶບທຳລາຍຂໍ້ມູນເກົ່າ	ບໍ່ມີ Privacy Policy (84.6%), ໃຊ້ BYOD (61.5%), ເກັບຂໍ້ມູນບໍ່ມີກຳນົດລຶບ (92.3%)	ຜູ້ປະກອບການໂຮງແຮມ ແລະ ບໍລິສັດທ່ອງທ່ຽວ	ໄລຍະສັ້ນ / ທັນທີ (1-6 ເດືອນ)

4. ວິພາກຜົນ

ຜົນການສຶກສາຊີ້ໃຫ້ເຫັນວ່າ ກອບກົດໝາຍວ່າດ້ວຍການປົກປ້ອງຂໍ້ມູນເອເລັກໂຕຣນິກ ປີ 2017 ມີລັກສະນະເປັນກອບກວ້າງໆ ທີ່ຂາດມາດຕະການບັງຄັບທາງເຕັກນິກ ແລະ ກົນໄກຕອບໂຕ້ເຫດສຸກເສີນ.

4.1 ພັດທະນາການຂອງກອບນິຕິກຳລາວ: ຈາກກົດໝາຍປີ 2017 ສູ່ກົດໝາຍຄວາມປອດໄພໄຊເບີ ປີ 2025

ຜົນການວິເຄາະຕົວບົດກົດໝາຍຊີ້ໃຫ້ເຫັນວ່າ ກອບນິຕິກຳຂອງ ສປປ ລາວ ມີວິວັດທະນາການສຳຄັນຈາກ ກົດໝາຍວ່າດ້ວຍການປົກປ້ອງຂໍ້ມູນເອເລັກໂຕຣນິກ ປີ 2017 ເຊິ່ງເປັນກອບກວ້າງໆ ແລະ ຂາດມາດຕະການບັງຄັບທາງເຕັກນິກ, ມາສູ່ການປະກາດໃຊ້ ກົດໝາຍວ່າດ້ວຍຄວາມປອດໄພໄຊເບີ ປີ 2025 ທີ່ເຂົ້າມາເສີມສ້າງຄວາມເຂັ້ມແຂງໃນ 4 ດ້ານຫຼັກ ຄື: (1) ການວາງມາດຕະຖານຄວາມປອດໄພຂອງລະບົບ ແລະ ການຈັດແບ່ງລະດັບຄວາມສຳຄັນຂອງພື້ນຖານໂຄງລ່າງຂໍ້ມູນຂ່າວສານ; (2) ການຍົກລະດັບບົດບາດຂອງ LaoCERT ໃນການຕິດຕາມ-ກວດກາ ແລະ ປະເມີນຄວາມສ່ຽງຢ່າງເປັນລະບົບ; (3) ການກຳນົດກົນໄກການຮັບມື ແລະ ລາຍງານເຫດສຸກເສີນທາງໄຊເບີ (Cyber Incident Response) ແທນການຂໍຄວາມຊ່ວຍເຫຼືອແບບສະໝັກໃຈໃນມາດຕາ 26 ຂອງກົດໝາຍປີ 2017; ແລະ (4) ການເພີ່ມພັນທະຄວາມຮັບຜິດ ຊອບໃຫ້ແກ່ຜູ້ໃຫ້ບໍລິການລະບົບດິຈິຕອນ.

ເຖິງຢ່າງໃດກໍຕາມ, ເມື່ອພິຈາລະນາຕາມຫຼັກການປົກປ້ອງຂໍ້ມູນສາກົນ (GDPR ແລະ ກອບອາຊຽນ), ກົດໝາຍຄວາມປອດໄພໄຊເບີ ປີ 2025 ຍັງເຮັດໜ້າທີ່ເປັນພຽງ "ເສົາຄ້ຳດ້ານຄວາມໝັ້ນຄົງທາງເຕັກນິກ (Technical Security Pillar)" ແຕ່ບໍ່ສາມາດທົດແທນ "ກົດໝາຍແມ່ບົດວ່າດ້ວຍການປົກປ້ອງຂໍ້ມູນສ່ວນບຸກຄົນ (Omnibus PDPA)" ໄດ້. ທັງນີ້ ຍ້ອນກົດໝາຍປີ 2025 ຍັງບໍ່ໄດ້ຕອບໂຈດຊ່ອງຫວ່າງຫຼັກ 3 ປະການ ທີ່ພົບໃນຂໍ້ 3.1 ຄື: ການຄຸ້ມຄອງຂໍ້ມູນໃນຮູບແບບເອກະສານເຈ້ຍ, ການຮັບຮອງສິດທິຂອງເຈົ້າຂອງຂໍ້ມູນຢ່າງຄົບຖ້ວນ (ເຊັ່ນ ສິດໂອນຍ້າຍຂໍ້ມູນ ແລະ ສິດຄັດຄ້ານ) ແລະ ການສ້າງຕັ້ງອົງການກຳກັບດູແລການປົກປ້ອງຂໍ້ມູນ (DPA) ທີ່ມີຄວາມເປັນເອກະລາດ.

4.2 ຊ່ອງຫວ່າງລະຫວ່າງ "ກົດໝາຍໃນຕົວບົດ" ກັບ "ກົດໝາຍໃນພາກປະຕິບັດ" ໃນທ້ອງຖິ່ນ

ຫຼັກຖານພາກສະໜາມຈາກແຂວງຫຼວງພະບາງ ຢືນຢັນທິດສະດີ *Law in Books vs. Law in Action* ຢ່າງຊັດເຈນ ໂດຍສະແດງໃຫ້ເຫັນວ່າ ການມີນິຕິກຳໃນລະດັບຊາດຍັງບໍ່ສາມາດສ້າງການປົກປ້ອງທີ່ມີປະສິດທິຜົນໃນລະດັບທ້ອງຖິ່ນໄດ້. ປັດໄຈສຳຄັນທີ່ເຮັດໃຫ້ເກີດຊ່ອງຫວ່າງດັ່ງກ່າວ ແມ່ນຄວາມຂັດແຍ່ງລະຫວ່າງ ຂອບເຂດກົດໝາຍທີ່ຈຳກັດສະເພາະຂໍ້ມູນເອເລັກໂຕຣນິກ ກັບ ວິຖີການດຳເນີນທຸລະກິດແບບປະສົມ (Hybrid Workflow) ຂອງໂຮງແຮມ ແລະ ບໍລິສັດທ່ອງທ່ຽວ 100% (13/13 ແຫ່ງ) ທີ່ຍັງຕ້ອງຖ່າຍສຳເນົາໜັງສືຜ່ານແດນເປັນເຈ້ຍເພື່ອກຽມໃຫ້ເຈົ້າໜ້າທີ່ກວດກາ. ນອກຈາກນີ້, ການຂາດຈຸດປະສານງານຂັ້ນແຂວງ (Provincial Focal Point) ແລະ ການທີ່ຜູ້ປະກອບການ 84.6% ບໍ່ມີນະໂຍບາຍຄວາມເປັນສ່ວນຕົວເປັນລາຍລັກອັກສອນ ສະທ້ອນໃຫ້ເຫັນວ່າ ກົນໄກການຖ່າຍທອດນະໂຍບາຍຈາກສູນກາງລົງສູ່ຜູ້ປະຕິບັດງານລະດັບທ້ອງຖິ່ນຍັງຂາດຄວາມຕໍ່ເນື່ອງ.

4.3 ການສົມທຽບກັບບໍລິບົດພາກພື້ນ ແລະ ທາງເລືອກນະໂຍບາຍທີ່ສົມເຫດສົມຜົນ

ເມື່ອສົມທຽບຜົນການສຶກສານີ້ກັບວັນນະກຳໃນພາກພື້ນອາຊຽນ ພົບທັງຈຸດທີ່ສອດຄ່ອງ ແລະ ຈຸດທີ່ແຕກຕ່າງເຊິ່ງມີຄວາມສຳຄັນຕໍ່ການອອກແບບນະໂຍບາຍ:

- **ຈຸດທີ່ສອດຄ່ອງ (ຄວາມອ່ອນໄຫວດ້ານຊັບພະຍາກອນຂອງ SMEs):** ຂໍ້ຈຳກັດດ້ານງົບປະມານ, ການຂາດບຸກຄະລາກອນວິຊາສະເພາະ ແລະ ພຶດຕິກຳການໃຊ້ອຸປະກອນສ່ວນຕົວ (BYOD/WhatsApp) ຂອງທຸລະກິດ 61.5% ໃນຫຼວງພະບາງ ສອດຄ່ອງກັບການສຶກສາຂອງ Tang & Chen (2023) ໃນປະເທດ

ໄທ ທີ່ຊີ້ໃຫ້ເຫັນວ່າໂຮງແຮມຂະໜາດນ້ອຍປະເຊີນພາລະຕົ້ນທຶນການປະຕິບັດຕາມກົດໝາຍ (Compliance Cost Burden) ສູງ ແລະ ຂາດເຈົ້າໜ້າທີ່ DPO.

• **ຈຸດທີ່ແຕກຕ່າງ (ໄລຍະການຜັດທະນາຂອງບັນຫາ):** ບັນຫາໃນປະເທດໄທ (Tang & Chen, 2023) ແລະ ອິນໂດເນເຊຍ (UU PDP, 2022) ເກີດຂຶ້ນ ພາຍຫຼັງ ທີ່ມີກົດໝາຍແມ່ບົດບັງຄັບໃຊ້ແລ້ວ ເຮັດໃຫ້ທຸລະກິດເກີດຄວາມເມື່ອຍລ້າໃນການຂໍຄວາມຍິນຍອມ (Consent Fatigue) ຈາກຂັ້ນຕອນທີ່ເຂັ້ມງວດ. ໃນທາງກົງກັນຂ້າມ, ບັນຫາໃນແຂວງຫຼວງພະບາງເປັນ ບັນຫາຂັ້ນຕົ້ນ (Pre-compliance Gap) ຄືການຂາດກົນໄກພື້ນຖານ ໂດຍຜູ້ປະກອບການ 84.6% ໃຫ້ລູກຄ້າເຊັນລວມໃນໃບດຽວ, 92.3% ເກັບຂໍ້ມູນໄວ້ໂດຍບໍ່ມີກຳນົດລຶບ ແລະ ບໍ່ເຄີຍມີກໍລະນີຖອນຄວາມຍິນຍອມເລີຍ (0/13).

ດ້ວຍເຫດນີ້, ສປປ ລາວ ບໍ່ຄວນນຳເອົາຮູບແບບການບັງຄັບໃຊ້ທີ່ເຂັ້ມງວດ ແລະ ມີໂທດປັບໃໝສູງແບບ GDPR ຫຼື PDPA ຂອງໄທ ມາບັງຄັບໃຊ້ແບບກະທັນຫັນ ເພາະຈະສ້າງພາລະຕົ້ນທຶນເກີນຄວາມສາມາດຂອງ SMEs ໃນທ້ອງຖິ່ນ. ແຕ່ຄວນເລືອກໃຊ້ “ຮູບແບບການກຳກັບດູແລທີ່ໄດ້ສັດສ່ວນ ແລະ ຄ່ອຍເປັນຄ່ອຍໄປ (Proportionate & Phased Regulatory Model)” ຕາມຈິດໃຈຂອງກອບອາຊຽນ (2016) ໂດຍເລີ່ມຈາກການສ້າງເຄື່ອງມືມາດຕະຖານຕົ້ນທຶນຕ່ຳ (ເຊັ່ນ ແບບຟອມ 3 ພາສາ ແລະ ຄູ່ມື SMEs) ໃນໄລຍະສັ້ນ ຄວບຄູ່ກັບການຍົກລະດັບກົດໝາຍແມ່ບົດໃນໄລຍະກາງ.

4.4 ຂໍ້ຈຳກັດຂອງການສຶກສາ ແລະ ທິດທາງການຄົ້ນຄວ້າຕໍ່ໄປ

ການສຶກສານີ້ມີຂໍ້ຈຳກັດດ້ານຂະໜາດກຸ່ມຕົວຢ່າງ (16 ທ່ານ/ຫົວໜ່ວຍ) ແລະ ຂອບເຂດພື້ນທີ່ສະເພາະແຂວງຫຼວງພະບາງ ເຊິ່ງອາດບໍ່ສາມາດສະຫຼຸບອ້າງອີງເປັນຕົວແທນຂອງທົ່ວປະເທດໄດ້ທັງໝົດ. ການຄົ້ນຄວ້າໃນອະນາຄົດຄວນຂະຫຍາຍຂອບເຂດໄປສູ່: (1) ການສຳຫຼວດທັດສະນະ ແລະ ຄວາມຄາດຫວັງຂອງນັກທ່ອງທ່ຽວສາກົນໃນຖານະເຈົ້າຂອງຂໍ້ມູນ; (2) ການສຶກສາປຽບທຽບລະຫວ່າງແຂວງທ່ອງທ່ຽວຫຼັກ ເຊັ່ນ ນະຄອນຫຼວງວຽງຈັນ, ຈຳປາສັກ ແລະ ເຂດເສດຖະກິດພິເສດສາມຫຼ່ຽມຄຳ ແລະ (3) ການວິໄຈເຊີງປະຕິບັດການ (Action Research) ເພື່ອທົດສອບປະສິດທິຜົນຂອງຊຸດຄູ່ມືປົກປ້ອງຂໍ້ມູນສຳລັບ SMEs ໃນພາກປະຕິບັດຕົວຈິງ.

5. ສະຫຼຸບ

ການສຶກສາຄົ້ນຄວ້າຄັ້ງນີ້ໄດ້ບັນລຸຕາມຈຸດປະສົງທີ່ກຳນົດໄວ້. ດ້ານກອບກົດໝາຍ ພົບວ່າ ສປປ ລາວ ຍັງຂາດກົດ ໝາຍແມ່ບົດວ່າ ດ້ວຍການປົກປ້ອງຂໍ້ມູນສ່ວນບຸກຄົນ ເຮັດໃຫ້ບົດບັນຍັດທີ່ມີຢູ່ສະພາບກະຈັດກະຈາຍ ແລະ ຄຸ້ມຄອງສະ ເພາະຂໍ້ມູນເອເລັກໂຕຣນິກ ເຊິ່ງຢູ່ນອກຂອບເຂດການຄຸ້ມຄອງຂໍ້ ມູນໃນເອກະສານເຈ້ຍ. ດ້ານພາກປະຕິບັດໃນຂະແໜງ ໂຮງແຮມ ແລະ ທ່ອງທ່ຽວ ແຂວງຫຼວງພະບາງ ພົບວ່າ ຜູ້ປະກອບການສ່ວນໃຫຍ່ຍັງຂາດນະໂຍບາຍຄວາມເປັນສ່ວນຕົວ ພ້ອມທັງປະເຊີນຂໍ້ ຈຳກັດດ້ານຊັບພະຍາກອນ, ການນຳໃຊ້ອຸປະກອນສ່ວນຕົວ ແລະ ຂາດອົງການກຳກັບດູແລລະດັບທ້ອງ ຖິ່ນ. ດ້ານແນວທາງການປັບປຸງ ໄດ້ສະເໜີໃຫ້ມີການຮ່າງກົດໝາຍແມ່ບົດທີ່ກວມລວມ, ການກຳນົດຈຸດປະສານງານຂັ້ນ ແຂວງ ແລະ ການສ້າງຄູ່ມືແນະນຳທີ່ສົມເຫດສົມຜົນສຳລັບທຸລະກິດຂະໜາດນ້ອຍ ເພື່ອເສີມສ້າງຄວາມເຊື່ອໝັ້ນ ແລະ ຍົກ ລະດັບມາດຕະຖານການບໍລິການທ່ອງທ່ຽວ.

6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະ ນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ຝຽງຜູ້ດຽວ.

7. ເອກະສານອ້າງອີງ

ກະຊວງເຕັກໂນໂລຊີ ແລະ ການສື່ສານ. (2021). *ວິໄສທັດການພັດທະນາເສດຖະກິດດິຈິຕອນແຫ່ງຊາດ ໄລຍະ 20 ປີ (2021-2040), ຍຸດທະສາດ ໄລຍະ 10 ປີ (2021-2030) ແລະ ແຜນພັດທະນາ ໄລຍະ 5 ປີ (2021-2025)*. ກະຊວງເຕັກໂນໂລຊີ ແລະ ການສື່ສານ.

ສະພາແຫ່ງຊາດ. (2015). *ກົດໝາຍວ່າດ້ວຍການຄ້າ ແລະ ສັກຕົ້ນອຂະຫຍາຍສະບັບຄອນພິວເຕີ* (ສະບັບເລກທີ 61/ສພຊ, ລົງວັນທີ 15 ກໍລະກົດ 2015). ຈົດໝາຍເຫດທາງລັດຖະສະພາ.

ສະພາແຫ່ງຊາດ. (2016). *ກົດໝາຍວ່າດ້ວຍເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ* (ສະບັບເລກທີ 02/ສພຊ, ລົງວັນທີ 07 ເມສາ 2016). ຈົດໝາຍເຫດທາງລັດຖະສະພາ.

ສະພາແຫ່ງຊາດ. (2017a). *ກົດໝາຍວ່າດ້ວຍການປົກປ້ອງຂໍ້ມູນເອເລັກໂຕຣນິກ* (ສະບັບເລກທີ 25/ສພຊ, ລົງວັນທີ 12 ພຶດສະພາ 2017). ຈົດໝາຍເຫດທາງລັດຖະສະພາ.

ສະພາແຫ່ງຊາດ. (2017b). *ປະມວນກົດໝາຍອາຍາ* (ສະບັບເລກທີ 26/ສພຊ, ລົງວັນທີ 17 ພຶດສະພາ 2017). ຈົດໝາຍເຫດທາງລັດຖະສະພາ.

ສະພາແຫ່ງຊາດ. (2022). *ກົດໝາຍວ່າດ້ວຍທຸລະກຳທາງເອເລັກໂຕຣນິກ* (ສະບັບປັບປຸງ, ເລກທີ 31/ສພຊ, ລົງວັນທີ 29 ທັນວາ 2022). ຈົດໝາຍເຫດທາງລັດຖະສະພາ.

ສະພາແຫ່ງຊາດ. (2025). *ກົດໝາຍວ່າດ້ວຍຄວາມປອດໄພທາງໄຊເບີ* (ສະບັບເລກທີ 87/ສພຊ, ລົງວັນທີ 25 ມິຖຸນາ 2025). ຈົດໝາຍເຫດທາງລັດຖະສະພາ.

ພະແນກອັດທະນະທຳ ແລະ ທ່ອງທ່ຽວ ແຂວງຫຼວງພະບາງ. (2024). *ບົດລາຍງານສະຖິຕິການທ່ອງທ່ຽວ ແລະ ສະພາບການດຳເນີນທຸລະກິດການບໍລິການໃນແຂວງຫຼວງພະບາງ ປະຈຳປີ 2024*. ພະແນກອັດທະນະທຳ ແລະ ທ່ອງທ່ຽວ ແຂວງຫຼວງພະບາງ.

ພະແນກອັດທະນະທຳ ແລະ ທ່ອງທ່ຽວ ແຂວງຫຼວງພະບາງ. (2025). *ບົດລາຍງານສະຖິຕິການທ່ອງທ່ຽວ ແລະ ສະພາບການດຳເນີນທຸລະກິດການບໍລິການໃນແຂວງຫຼວງພະບາງ ປະຈຳປີ 2025*. ພະແນກອັດທະນະທຳ ແລະ ທ່ອງທ່ຽວ ແຂວງຫຼວງພະບາງ.

ASEAN Secretariat. (2016). *ASEAN framework on personal data protection*. ASEAN Secretariat. https://asean.org/ https://asean.org/wp-content/uploads/2024/02/ASEAN-Documents-Series-2016.pdf

ASEAN Secretariat. (2018). *ASEAN smart cities framework*. https://asean.org/wp-content/uploads/2021/09/ASEAN-Smart-Cities-Framework.pdf

ASEAN Secretariat. (2023). *ASEAN digital economy framework agreement (DEFA) study report*. ASEAN Secretariat. https://asean.org/ https://asean.org/wp-content/uploads/2023/10/ASEAN-Digital-Economy-Framework-Agreement-Public-Summary_Final-published-version-1.pdf

Boston Consulting Group. (2023). *Study on the ASEAN Digital Economy Framework Agreement (DEFA): Public summary*. ASEAN Secretariat. https://asean.org/wpcontent/uploads/2023/10/ASEAN-Digital-Economy-Framework-Agreement-Public-Summary_Final-published-version-1.pdf

Cybersecurity Ventures. (2023). *60 percent of small companies close within 6 months of being hacked*. Cybercrime Magazine. https://cybersecurityventures.com/60-percent-of-small-companies-close-within-6-months-of-being-hacked/

European Parliament & Council of the European Union. (2016). *Regulation (EU) 2016/679 ... (General Data Protection Regulation). Official Journal of the European Union, L 119, 1-88*. https://eur-lex.europa.eu/eli/reg/2016/679/oj

Google, Temasek, & Bain & Company. (2023). *e-Conomy SEA 2023: Reaching new heights - Navigating the path to profitable growth*. https://economysea.withgoogle.com/

Google, Temasek, & Bain & Company. (2024). *e-Conomy SEA 2024: Profits on the rise, harnessing SEA's advantage*. https://economysea.withgoogle.com/ https://services.google.com/fh/files/misc/e_conomy_sea_2024_report.pdf

Government of the Socialist Republic of Vietnam. (2025). *Law No. 91/2025/QH15 on Personal Data Protection*. National Assembly of Vietnam.

Greenleaf, G. (2021). *Asian data privacy laws: Trade & human rights perspectives* (2nd ed.). Oxford University Press.

Guest, G., Bunce, A., & Johnson, L. (2006). *How many interviews are enough? An experiment with data saturation and variability. Field Methods*, 18(1), 59–82. https://doi.org/10.1177/1525822X05279903

Lim, S. K., & Nor, M. Z. (2023). *Ransomware impacts on Southeast Asian tourism MSMEs. Journal of Cybersecurity & Privacy, 3*(2), 145–162.

Malterud, K., Siersma, V. D., & Guassora, A. D. (2016). *Sample size in qualitative interview studies: Guided by information power. Qualitative Health Research*, 26(13), 1753–1760. https://doi.org/10.1177/1049732315617444

National Assembly of the Kingdom of Thailand. (2019). *Personal Data Protection Act, B.E. 2562* (2019). *Royal Thai Government Gazette*, 136(69A), 52–95.

Republic of Indonesia. (2022). *Law of the Republic of Indonesia Number 27 of 2022 concerning Personal Data Protection (UU PDP). State Gazette of the Republic of Indonesia*.

Svantesson, D. J. B. (2020). *Data protection in the ASEAN region: A (legal) culture clash between Western concepts and Asian realities? International Data Privacy Law, 10(2), 170–183*.

Tan, H. M., & Chai, R. (2024). *Cybersecurity breach vectors in Asian hospitality networks. Tourism Management Perspectives*, 49, 101180.

Tang, Z., & Chen, J. (2023). *SME compliance challenges under personal data protection regulations: Evidence from the Southeast Asian hospitality sector. Journal of Data Protection & Privacy, 6(1), 88–104*.